VIENTIANE CENTER
ວຽງຈັນເຊັ້ນເຕີ
ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ: 035 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ 29 NOV 2019

ມະຕິ

ກອງປະຊຸມວິສາມັນຜູ້ຖືຮຸ້ນ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ຄັ້ງທີ 1 ປະຈຳປີ 2019

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື.

ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ທີ່ນັບຖື.

ເລື່ອງ: ການແຈ້ງມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2019

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ໄດ້ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2019 ຂຶ້ນໃນວັນທີ 29 ພະຈິກ 2019, ເວລາ: 15:00 ໂມງ ທີ່ຫ້ອງ Diamond ໂຮງແຮມແລນມາກ, ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 32 ທ່ານ, ແບ່ງອອກເປັນຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງທັງໝົດ 30 ທ່ານ ແລະ ມອບສິດໃຫ້ຕາງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 2 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 146,525,700 ຮຸ້ນ ຫຼື ເທົ່າກັບ 99 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ໂດຍກອງປະຊຸມມີມະຕິດັ່ງນີ້:

1. **ພິຈາລະນາ ແລະ ຮັບຮອງແຜນການບໍ່ແບ່ງເງິນປັນຜົນປະຈຳປີ 2018 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ;**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, LAO PDR, Tel & Fax: (+856) 21 228299

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍ.
- ລວມ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍ.

2. ພິຈາລະນາ ແລະ ຮັບຮອງແຜນການຮັບຊື້ພື້ນທີ່ຫ້ອງການທີ່ເປັນລາຍການທີ່ກ່ຽວພັນ;

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 50,526,500 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ມີສິດລົງຄະແນນສຽງໃນກອງປະຊຸມ (ໂດຍອາລະນີ້ ທ່ານ ເວີຍ ຫວາ ຕາງໜ້າຜູ້ຖືຮຸ້ນບໍລິສັດ ພັດທະນາສູນເສດຖະກິດການຄ້າ ຄົບວົງຈອນ ໜອງຈັນ ຕອນເໜືອຈຳກັດ ບໍ່ມີສິດລົງຄະແນນສຽງ. ການນັບຄະແນນໃນວາລະນີ້ຈະນັບສະເພາະຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນທີ່ມີສິດລົງຄະແນນສຽງ ຍົກເວັ້ນ ທ່ານ ເວີຍ ຫວາ).
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍ.
- ລວມ 50,526,500 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍ.

3. ພິຈາລະນາ ແລະ ຮັບຮອງການປ່ຽນແປງວັດຖຸປະສົງໃນການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນບາງສ່ວນ;

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍ.
- ລວມ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍ.

4. ພິຈາລະນາ ແລະ ຮັບຮອງການສືບຕໍ່ໃຫ້ບໍລິສັດ ເອັນແອນຢັ້ງ ລາວ ຈຳກັດເປັນບໍລິສັດກວດສອບບັນຊີໃຫ້ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ;

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍ.
- ລວມ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍ.

5. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ແລະ ລາຕຳແໜ່ງສະພາບໍລິຫານອິດສະຫຼະ;

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, LAO PDR, Tel & Fax: (+856) 21 228299

- ເຫັນດີ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍ.
- ລວມ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍ.

6. **ພິຈາລະນາ ແລະ ຮັບຮອງການປັບປຸງໂຄງຮ່າງຄະນະກຳມະການສະພາບໍລິຫານຂອງກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ 1 ປະຈຳປີ 2017;**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍ.
- ລວມ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍ.

7. **ລາຍງານການແຕ່ງຕັ້ງຄະນະອຳນວຍການ ແລະ ເລຂານຸການສະພາບໍລິຫານຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ວາລະ ຄັ້ງທີ 1 ປະຈຳປີ 2019.**

ກອງປະຊຸມໄດ້ຮັບຊາບການລາຍງານ, ໂດຍວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

ກອງປະຊຸມໄດ້ພິຈາລະນາຄົບຖ້ວນຕາມວາລະກອງປະຊຸມແລ້ວ, ບໍ່ມີເລື່ອງອື່ນໆທີ່ຕ້ອງໃຫ້ກອງປະຊຸມຮັບຊາບ ແລະ ພິຈາລະນາຕື່ມ, ປະທານຈຶ່ງກ່າວປິດກອງປະຊຸມໃນເວລາ 17:00 ໂມງ.

ຂໍນມາດ້ວຍຄວາມເຄົາລົບນັບຖື

ປະທານກອງປະຊຸມ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

Li XiaoDong

ທ່ານ ຫຼີ ສ່ຽວຕົງ

ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, LAO PDR, Tel & Fax: (+856) 21 228299